# ມູນນິທິຄອບຄົວລະດັບໂລກ THE ROBERT H. N. HO
# ເຊີນຮ່ວມແຂ່ງຂັນເພື່ອຊີງທຶນການສຶກສາແລະທຶນ ປີ 2025 - 2026
# ເລື້ອງການສຶກສາພຸດທະສາດສະໜາ

The American Council of Learned Societies (ACLS) ປະກາດເຊີນຊວນໃຫ້ສະໝັກແຂ່ງຂັນຊີງເງິນທຶນ ຈາກໂຄງການມູນນິທິຄອບຄົວ The Robert H. N. Ho ປະຈໍາປີ 2025-26 ໃນການຮ່ວມມືກັບມູນນິທິ, ACLS ສະເໜີໃຫ້ແຂ່ງຂັນຊີງເງິນທຶນວິຈັຍແລະເງິນທຶນບໍ່ມີເງື່ອນໄຂ ເຊິ່ງເປັນທຶນທີ່ສະໜັບສະໜູນການຂະຫຍາຍຄວາມເຂົ້າໃຈແລະການຕີຄວາມ ຄວາມຄິດທາງພຸດທະສາສະໜາ ໃນດ້ານການສຶກສາແລະສັງຄົມ, ເສີມສ້າງຄວາມເຂັ້ມແຂງໃຫ້ເຄືອຂ່າຍນັກວິຊາການດ້ານພຸດທະສາສະໜາ, ແລະເພີ່ມຄວາມສາມາດເບິ່ງເຫັນກະແສນະວັດຕະກໍາໃນການສຶກສາແລະການຄົ້ນຄວ້າປະເພນີທາງພຸດທະສາສະໜາ ເຫຼົ່ານັ້ນ.

ການແຂ່ງຂັນເຫຼົ່ານີ້ແມ່ນການແຂ່ງຂັນທົ່ວໂລກ. ຍິນດີຕ້ອນຮັບນັກວິຊາການທຸກຄົນ - ທຸກບ່ອນໃນໂລກ - ທີ່ມີສ່ວນຮ່ວມໃນການສຶກສາປະເພນີພຸດທະສາດສະໜາດ້ານໃດດ້ານໜຶ່ງໃຫ້ສະໝັກ. ຍົກເວັ້ນນັກວິຊາການພຸດທະສາສະນິກະຊົນ ເຊິ່ງຕ້ອງມີບັດອະນຸຍາດເຮັດວຽກໃນປະເທດຂອງອົງການຈັດຕັ້ງເຈົ້າພາບ, ບໍ່ມີຂໍ້ຈໍາກັດກ່ຽວກັບສະຖານທີ່ເຮັດວຽກທີ່ສະເໜີນີ້ ແລະບໍ່ມີຂໍ້ຈໍາກັດວ່າຕ້ອງເປັນພົນລະເມືອງຂອງຜູ້ສະໝັກ.

**ACLS ສະໜັບສະໜູນຢ່າງຫຼາຍໃຫ້ນັກວິຊາການທີ່ຂຶ້ນກັບມະຫາວິທະຍາໄລ ແລະສະຖາບັນວັດໃນອາຊີສະໝັກ.**

ຜູ້ສະໝັກຕ້ອງສົ່ງຄໍາຮ້ອງສະໝັກເປັນພາສາອັງກິດ, ແຕ່ຜົນງານການຄົ້ນຄວ້າສຸດທ້າຍສາມາດສົ່ງເປັນພາສາໃດກໍ່ໄດ້. ວຽກງານທີ່ສະເໜີຕ້ອງຢູ່ໃນດ້ານມະນຸດສະທໍາແລະວິທະຍາສາດສັງຄົມ.

**ກໍານົດເວລາສະໝັກແຂ່ງຂັນຊີງທຶນຕໍ່ໄປນີ້ແມ່ນເວລາ 9:00 ໂມງແລງ ຕາມເວລາ Eastern Standard Time ວັນທີ 20 ເດືອນພະຈິກ 2025:**

- ທຶນວິທະຍານິພົນດ້ານການສຶກສາພຸດທະສາສະໜາ
- ທຶນວິຈັຍວຽກເບື້ອງຕົ້ນດ້ານການສຶກສາພຸດທະສາສະໜາ
- ທຶນສະໜັບສະໜຸນຜົນກະທົບຕໍ່ສາທາລະນະດ້ານການສຶກສາພຸດທະສາສະໜາ

**ກໍານົດເວລາການແຂ່ງຂັນຊີງທຶນຕໍ່ໄປນີ້ແມ່ນເວລາ 9:00 ໂມງແລງ ຕາມເວລາ Eastern Standard Time ວັນທີ 27 ເດືອນມັງກອນ 2026:**

- ນັກວິຊາການດ້ານພຸດທະສາສະໜາທົ່ວໄປ
- ອາຈານໃໝ່ສອນດ້ານການສຶກສາພຸດທະສາສະໜາ

**ສໍາລັບຂໍ້ມູນທົ່ວໄປກ່ຽວກັບໂຄງການແລະເງິນທຶນໃຫ້ບໍ່ມີເງື່ອນໄຂ:**
https://www.acls.org/programs/robert-h-n-ho-family-foundation-in-buddhist-studies/

**ສໍາລັບຂໍ້ມູນກ່ຽວກັບການສໍາມະນາອອນໄລນ໌ແລະການປະຊຸມປະຕິບັດ:**
https://www.acls.org/resources/informational-webinars-and-office-hours-for-2025-26-acls-fellowships-and-grants/

**ກະລຸນາອ່ານຄໍາຖາມທີ່ມັກຖາມໄດ້ທີ່:**
https://www.acls.org/faqs/faq-the-robert-h-n-ho-family-foundation-program-in-buddhist-studies/